ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------

ກະຊວງ ກະສິກຳ ແລະ ປ່າໄມ້

ກົມປູກຝັງ

0541

ເລກທີ ................................/ກປຝ

ນະຄອນຫລວງ ວຽງຈັນ, ວັນທີ ......25 JUL 2008

# ແຈ້ງການ

ຮຽນ : ທ່ານ ຫົວໜ້າ ຂະແໜງປູກຝັງ ນະຄອນຫລວງ ແລະ ແຂວງ ໃນຂອບເຂດ ທົ່ວປະເທດ,

ເລື່ອງ : ໃຫ້ຢຸດຕິ ການອອກ ໃບຢັ້ງຢືນ ສຸຂະອະນາໄມພືດ (Phytosanitary Certificate) ໃຫ້ ໝາກກໍ່ ແລະ ຜະລິດຕະພັນ ໝາກກໍ່ (Walnut), ທີ່ຈະສົ່ງໄປຍັງ ສາທາລະນະລັດ ເກົາຫລີ.

- ອີງຕາມ ແຈ້ງການ ຂອງ ຄະນະເລຂາທິການ ລັດຖະບານ ສະບັບ ເລກທີ 1247/ຄລບ, ລົງວັນທີ 14 ກໍລະກົດ 2008.
- ອີງໃສ່ ການຊີ້ນຳ ຂອງທ່ານ ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້, ວັນທີ 08/07/2008.
- ອີງໃສ່ ແຈ້ງການ ຂອງກົມປູກຝັງ ສະບັບ ເລກທີ 0098/ກປຝ.08, ລົງວັນທີ 6 ກຸມພາ 2008

ໂດຍ ປະຕິບັດ ຕາມ ແຈ້ງການ ຂອງ ຄະນະເລຂາທິການ ລັດຖະບານ ສະບັບ ເລກທີ 1247/ຄລບ, ລົງວັນທີ 14 ກໍລະກົດ 2008, ເພື່ອຜັນຂະຫຍາຍ ການຈັດຕັ້ງປະຕິບັດ ວຽກງານໃນການ ຄຸ້ມຄອງ ພືດ ແລະ ຜະລິດຕະພັນ ພືດ ຂອງ ຂະແໜງການ ກະສິກຳ ແລະ ປ່າໄມ້ ໃຫ້ ສອດຄ່ອງກັບ ການຈັດຕັ້ງ ປະຕິບັດ ສັນຍາ ໃນຂອບ ການຮ່ວມມື ດ້ານການຄ້າເສລີ ອາຊຽນ - ສ.ປ. ຈີນ ແລະ ອາຊຽນ - ສ.ເກົາຫລີ (Agreement on Trade in Goods) ເວົ້າລວມ, ເວົ້າສະເພາະ ກໍຄື ເພື່ອບໍ່ໃຫ້ ເປັນການສ້າງພາບ ທາງລົບ ໃນການຮ່ວມມື ກັບ ສ. ເກົາຫລີ, ໂດຍສະເພາະ ໃນການຈັດຕັ້ງ ປະຕິບັດ ສັນຍາ, ສົນທິ ສັນຍາ ສາກົນ ກ່ຽວກັບ ການກັກກັນພືດ ແລະ ການສ້າງເງື່ອນໄຂ ໃຫ້ແກ່ ວຽກງານ ຈັດຕັ້ງ ປະຕິບັດ ສັນຍາ ກ່ຽວກັບ ການອຳນວຍ ຄວາມສະດວກ ໃຫ້ຄົນ ແລະ ສິນຄ້າ ຜ່ານ ຊາຍແດນ ທີ່ຂຶ້ນ ກັບ ບັນດາ ປະເທດ ໃນອະນຸພາກ ແມ່ນ້ຳຂອງ (GMS) ແລະ ອີງໃສ່ ເນື້ອໃນ ຈິດໃຈ ການ ຕົກລົງ ເປັນເອກະພາບ ຂອງ ກອງປະຊຸມ ສ່ອງແສງ ປະຈຳອາທິດ ຂອງ ກະຊວງ ກະສິກຳ ແລະ

ປ່າໄມ້ ຄັ້ງ ວັນທີ 25 ກໍລະກົດ 2008, ກົມປູກຝັງ, ຂໍຖືເປັນກຽດ ແຈ້ງມາຍັງ ທ່ານຫົວໜ້າ ຂະແໜງ ປູກຝັງ ນະຄອນຫລວງ ແລະ ແຂວງ ໃນຂອບເຂດ ທົ່ວປະເທດ ຄື ດັ່ງຕໍ່ໄປນີ້ :

1. ຫ້າມ ອອກ ໃບຢັ້ງຢືນ ສຸຂະອະນາໄມ ພືດ (Phytosanitary Certificate) ໃຫ້ຜະລິດຕະພັນ ສິນຄ້າ ສົ່ງອອກ ທີ່ບໍ່ແມ່ນ ຜະລິດຕະພັນ ກະສິກຳ ແລະ ປ່າໄມ້ ຈາກການປູກ ແລະ ເກັບຜົນ ຜະລິດ ຈາກ ທຳມະຊາດ ຢູ່ໃນ ສປປ ລາວ, ໂດຍສະເພາະ ໝາກກໍ່ (Walnut) ໄປຍັງ ສາທາລະນະລັດ ເກົາຫລີ.
2. ຫ້າມ ອອກ ໃບຢັ້ງຢືນ ສຸຂະອະນາໄມ ພືດ (Phytosanitary Certificate for Re-Export) ໃຫ້ແກ່ ສິນຄ້າ ຜະລິດຕະພັນ ກະສິກຳ ແລະ ປ່າໄມ້ ທີ່ ເປັນ ສິນຄ້າຜ່ານ (Consignment in transit) ແລະ ຜະລິດຕະພັນ ກະສິກຳ ແລະ ປ່າໄມ້ ທີ່ ບໍ່ສອດຄ່ອງ ກັບ ຂໍ້ຕົກລົງ ລະຫວ່າງ ປະເທດ, ຂໍ້ຕົກລົງ ແຫ່ງ ພາກພື້ນ ແລະ ມາດຕະການ ສຸຂະອະນາໄມພືດ (SPS) ຂອງ ສົນທິສັນຍາ ປ້ອງກັນພືດ ສາກົນ.
3. ແຈ້ງການ ຂໍ້ຫ້າມ ດັ່ງກ່າວ ຂ້າງເທິງ ມີຜົນບັງຄັບໃຊ້ ນັບແຕ່ມື້ອອກແຈ້ງການ ສະບັບນີ້ ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງ ມາຍັງທ່ານຫົວໜ້າ ຂະແໜງປູກຝັງ ນະຄອນຫລວງ ແລະ ແຂວງ ໃນຂອບ ເຂດ ທົ່ວປະເທດ ເພື່ອ ພ້ອມກັນ ເອົາໃຈໃສ່ ຈັດຕັ້ງປະຕິບັດ ການຄຸ້ມຄອງ ໃນການຮ່ວມມື ແລກປ່ຽນ ແລະ ຄ້າຂາຍ ຜະລິດຕະພັນ ສິນຄ້າ ກະສິກຳ ແລະ ປ່າໄມ້ ລະຫວ່າງ ປະເທດ ຕາມແນວທາງ ແລະ ນະໂຍບາຍ ຂອງ ພັກ ແລະ ລັດ ໃນໄລຍະໃໝ່ ໃຫ້ມີປະສິດທິຜົນ ເປັນຢ່າງດີ.

ຫົວໜ້າ ກົມປູກຝັງ

ກົມປູກຝັງ

ວິລະວັນ ພັນນຸລາດ

ສຳເນົານຳສົ່ງ :
- ທ່ານ ລັດຖະມົນ ວ່າການ
  ແລະ ຊ່ວຍວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ 3 ສະບັບ "ເພື່ອໃຊ້ຕາງລາຍງານ"
- ກົມກວດກາ 1 ສະບັບ
- ກົມແຜນການ 1 ສະບັບ
- ກົມຈັດຕັ້ງ ແລະ ພະນັກງານ 1 ສະບັບ
- ກົມປ່າໄມ້ 1 ສະບັບ
- ກົມກວດກາ ປ່າໄມ້ 1 ສະບັບ
- ພະແນກ ກະສິກຳ ແລະ ປ່າໄມ້ ນະຄອນຫລວງ ແລະ ແຂວງ ບ່ອນລະ 1 ສະບັບ
- ເກັບມ້ຽນ 2 ສະບັບ